ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມພົບປະ 2 ຝ່າຍ ລະຫວ່າງການນຳ
# ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ




ໃນວັນທີ 22 ພຶດສະພາ 2023 ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ ໄດ້ເປີດກອງປະຊຸມຮ່ວມພົບປະປຶກສາຫາລື 2 ຝ່າຍ ໂດຍການເປັນປະທານຮ່ວມຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ພ້ອມດ້ວຍຄະນະ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແມ່ນຍົກສູງການຮ່ວມມື ເພື່ອແກ້ໄຂວຽກງານການຄຸ້ມຄອງການເງິນ-ເງິນຕາ ສະຫຼຸບຕີລາຄາຄວາມຄືບໜ້າການຈັດຕັ້ງປະຕິບັດຕາມການຕົກລົງຂອງກອງປະຊຸມ ຄັ້ງວັນທີ 25 ພະຈິກ 2022 ຜ່ານມາ ຊຶ່ງມີວຽກງານການປັບປຸງກົນໄກການກຳນົດມາດຕະການກົນໄກການນຳເຂົ້າສິນຄ້າຟຸມເຟືອຍ; ການແກ້ໄຂໜີ້ສິນຮ່ວມກັນ; ການປັບປຸງກົນໄກການເກັບລາຍຮັບເປັນເງິນຕາຕ່າງປະເທດ; ການທົບທວນຄືນບັນດານິຕິກຳ-ລະບຽບການ ລະຫວ່າງ 2 ຂະແໜງການ ແລະ ວຽກງານອື່ນໆ.





ຜ່ານການປຶກສາຫາລືຂອງກອງປະຊຸມໄດ້ຕົກລົງ ແລະ ເປັນເອກະພາບຢ່າງສູງຕໍ່ກັບການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ເພື່ອແກ້ໄຂບັນຫາຂໍ້ຫຍຸ້ງຍາກທາງດ້ານການຄຸ້ມຄອງການເງິນ-ເງິນຕາ ຮ່ວມກັນ ໂດຍການແຕ່ງຕັ້ງຄະນະກຳມະການ ເພື່ອຄົ້ນຄວ້າກຳນົດ ລາຍການສິນຄ້ານຳເຂົ້າ, ປັບປຸງກົດໝາຍ ແລະ ນິຕິກຳອື່ນໆ ທີ່ປິ່ນອ້ອມໃນວຽກງານຄຸ້ມຄອງການນຳເງິນສົດເຂົ້າ-ອອກ ສປປ ລາວ, ການຄຸ້ມຄອງເງິນຕາຕ່າງປະເທດຕິດພັນກັບລາຍຮັບງົບປະມານຂອງລັດ ແລະ ວຽກງານອື່ນໆ ເພື່ອໃຫ້ການເຄື່ອນໄຫວວຽກງານຄຸ້ມຄອງການເງິນ-ເງິນຕາໃຫ້ມີຄວາມຄ່ອງຕົວ ແລະ ຮັດກຸມຍິ່ງຂຶ້ນ.



ພາຍຫຼັງສຳເລັດກອງປະຊຸມທັງສອງຝ່າຍຍັງໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັນໃນການປັບປຸງກົນໄກການຮ່ວມມື ແລະ ການເຊັນຢັ້ງຢືນເອກະສານສຳຄັນຮ່ວມກັນ.

ກອງປະຊຸມໄດ້ດຳເນີນເປັນເວລາເຄິ່ງວັນດ້ວຍຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

**ຂ່າວ-ພາບ ຈາກ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ**